ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ດ່ວນ

ແຂວງຫົວພັນ

ຫ້ອງວ່າການແຂວງ

ເລກທີ..139../ຫວຂ.ຫພ

ຫົວພັນ, ວັນທີ.12./...3..../ 2020

# ແຈ້ງການ

**ຮຽນ: ບັນດາ ທ່ານ ຫົວໜ້າພະແນກການ, ອົງການທຽບເທົ່າ ສະພາປະຊາຊົນແຂວງ, ກອງບັນຊາການ ປກສ ແຂວງ, ກອງບັນຊາການທະຫານ ແຂວງ ແລະ ບັນດາເຈົ້າເມືອງ 10 ເມືອງ ທົ່ວແຂວງຫົວພັນ ທີ່ນັບຖື.**

**ເລື່ອງ:** ແຈ້ງປິດບັນດາດ່ານເຂົ້າ - ອອກປະເທດຊົ່ວຄາວ ຈຳນວນ 10 ດ່ານ ເພື່ອປ້ອງກັນ ແລະ ສະກັດກັ້ນ ເຊື້ອພະຍາດ ໂຄວິດ - 19.

- ອີງຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຫ້ອງວ່າການແຂວງຫົວພັນ ສະບັບເລກທີ່ 727/ຈຂ, ລົງວັນທີ່ 19 / 06 / 2019.
- ອີງຕາມ ບົດບັນທຶກກອງປະຊຸມ ສະບັບເລກທີ 99/ຈຂ.ຫພ, ລົງວັນທີ 11 / 03 / 2020
- ອີງຕາມ ທິດຊີ້ນຳຂອງທ່ານ ເຈົ້າແຂວງຫົວພັນ ຄັ້ງວັນທີ 11 / 03 /2020

**ຫ້ອງວ່າການແຂວງຫົວພັນ** ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງທ່ານ ເຈົ້າແຂວງຫົວພັນ ກ່ຽວກັບການປ້ອງກັນ ແລະ ສະກັດກັ້ນ ເຊື້ອພະຍາດໂຄວິດ - 19 ລະອຽດມີດັ່ງນີ້:

1. ການເປີດໃຫ້ບໍລິການ ແລະ ປິດບັນດາດ່ານປະເພນີຄື:

+ ການເປີດໃຫ້ບໍລິການເປັນປົກກະຕິມີຈຳນວນ 4 ດ່ານຄື:
  1. ດ່ານສາກົນນ້ຳໂສຍ ( ນາແມວ )
  2. ດ່ານບ້ານດ່ານ
  3. ດ່ານປ່າຮ່າງ
  4. ດ່ານສົມຫວັງ
+ ໃຫ້ປິດດ່ານປະເພນີ ຈຳນວນ 10 ດ່ານຄື:
  1. ດ່ານນ້ຳໄຕ
  2. ດ່ານທ່າເລົ້າ
  3. ດ່ານເມືອງເກີນ
  4. ດ່ານພຽງເຜືອ
  5. ດ່ານມອງນ້ຳ
  6. ດ່ານນາຄ້າງ
  7. ດ່ານສິບດຸ້ງ
  8. ດ່ານເປົ້າ
  9. ດ່ານຍອດຕື້ວ
  10. ດ່ານແດນດິນ

➢ ຖ້າເຫັນວ່າມີຄວາມຈຳເປັນໃນການເຂົ້າ - ອອກແມ່ນໃຫ້ມານຳໃຊ້ບໍລິການເຂົ້າ - ອອກ ຢູ່ຈຳນວນ 4 ດ່ານ ທີ່ແຂວງອະນຸຍາດໃຫ້ເປີດບໍລິການ.

2. ມອບໃຫ້ພະແນກສາທາລະນະສຸກແຂວງ ແຕ່ງຕັ້ງພະນັກງານແພດໄປປະຈຳການຕິດຕາມກວດກາຢູ່ 4 ດ່ານຄື: ດ່ານສາກົນນ້ຳໂສຍ ( ນາແມວ ), ດ່ານບ້ານດ່ານ, ດ່ານປ່າຮ່າງ ແລະ ດ່ານສົມຫວັງ  ພະນັກງານດັ່ງກ່າວຕ້ອງແມ່ນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການພ້ອມອຸປະກອນຮັບໃຊ້ທີ່ເໝາະສົມ, ສາມາດກວດກາ - ປ້ອງກັນ ແລະ ສະກັດກັ້ນກັບເຊື້ອພະຍາດ ໂຄວິດ - 19.

- ມອບໃຫ້ພະແນກສາທາລະນະສຸກແຂວງ ເຮັດວຽກງານເຜີຍແຜ່ ເພື່ອປ້ອງກັນເຊື້ອພະຍາດໂຄວິດ-19 ຢູ່ໃນ 4 ດ່ານດັ່ງກ່າວນີ້ໃຫ້ເຂັ້ມງວດ.

3. ມອບໃຫ້ພະແນກການເງິນແຂວງ ສົມທົບກັບ ກອງບັນຊາການ ປກສ ແຂວງ ແລະ ເມືອງທີ່ກ່ຽວຂ້ອງໃຫ້ຮັບຮູ້, ເຂົ້າໃຈເຖິງຈຸດປະສົງຂອງການປິດດ່ານປະເພນີຈຳນວນ 10 ດ່ານ  ພ້ອມທັງແຈ້ງໃຫ້ພະນັກງານຂອງຕົນທີ່ປະຈຳການຢູ່ດ່ານດັ່ງກ່າວນີ້ຮັບຊາບ.

- ສ່ວນການເປີດໃຫ້ບໍລິການ ຈຳນວນ 10 ດ່ານ ແມ່ນໃຫ້ລໍຖ້າການອະນຸຍາດຈາກການນຳແຂວງຫົວພັນ ຈຶ່ງສາມາດໃຫ້ເປີດບໍລິການໄດ້.

4. ມອບໃຫ້ພະແນກການຕ່າງປະເທດແຂວງ ແຈ້ງໄປຍັງ ບັນດາແຂວງ ຂອງສສ ຫວຽດນາມ ທີ່ມີຊາຍແດນຕິດຈອດກັບແຂວງຫົວພັນ ໃຫ້ຮັບຮູ້ ແລະ ເຂົ້າໃຈນຳຈຸດປະສົງຂອງແຂວງຫົວພັນ.

5. ມອບໃຫ້ເຈົ້າເມືອງ 10 ທົ່ວແຂວງຫົວພັນ ເຮັດວຽກງານການເມືອງແນວຄິດ ແລະ ສຶກສາອົບຮົມໃຫ້ປະຊາຊົນໃຫ້ຮັບຮູ້ ແລະ ເອົາໃຈໃສ່ປ້ອງກັນເຊື້ອພະຍາດ ໂຄວິດ - 19 ໂດຍສະເພາະບັນດາເມືອງທີ່ມີຈຸດຂ້າມລອຍໄປມາຫາສູ່ ບັນດາເມືອງ, ແຂວງ ຂອງ ສສ ຫວຽດນາມ ໃຫ້ຢຸດຕິການໄປມາຫາສູ່ຊົ່ວຄາວ ເພື່ອປ້ອງກັນເຊື້ອພະຍາດໂຄວິດ - 19

6. ມອບໃຫ້ກອງບັນຊາການ ປກສ ແຂວງ ຊີ້ນຳເຈົ້າໜ້າທີ່ ຕມ ປະຈຳດ່ານ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ການຮ່ວມມືກັບເຈົ້າໜ້າທີ່, ແພດໝໍທີ່ລົງໄປປະຈຳການຢູ່ 4 ດ່ານທີ່ເປີດບໍລິການເພື່ອແນໃສ່ການປ້ອງກັນ ແລະ ສະກັດກັ້ນເຊື້ອພະຍາດ ໂຄວິດ - 19 ໃຫ້ໄດ້ຮັບຜົນດີ.

**ສະນັ້ນ ຫ້ອງວ່າການແຂວງ** ຈຶ່ງຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດນັບແຕ່ມື້ອອກແຈ້ງການສະບັບນີ້ເປັນຕົ້ນໄປຈົນກວ່າຈະມີແຈ້ງການປ່ຽນແປງ.

**ເຊັນແທນຫົວໜ້າຫ້ອງວ່າການແຂວງຫົວພັນ**

**ຮອງຫົວໜ້າຫ້ອງວ່າການແຂວງ**

ແຂວງຫົວພັນ
ຫ້ອງວ່າການ

**ບຸນລົມ ສີເມືອງວົງ**

*ບ່ອນນຳສົ່ງ:

- ທຸກພະແນກການອ້ອມຂ້າງແຂວງ
  ສາພາປະຊາຊົນ, ອົງການທຽບເທົ່າ
  ກອງບັນຊາການ ປກສ, ກອງບັນຊາການທະຫານ
  ເຈົ້າເມືອງ 10 ຫົວແຂວງຫົວພັນ
- ສັງລວມລັດ 1 ສະບັບ
- ສຳເນົາ 2 ສະບັບ